ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ (ທົບທວນຄືນ)

ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026

ສາລະບານ	**ໜ້າ**
ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານຖານະການເງິນ	1
ໃບລາຍງານຖານະການເງິນ	2 - 3
ໃບລາຍງານຜົນໄດ້ຮັບ	4
ໃບລາຍງານສ່ວນປ່ຽນແປງທຶນ	5
ໃບລາຍງານກະແສເງິນສົດ	6 - 7
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້	8 - 16

pwc

ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນກາງປີ

ເຖິງ: ສະພາບໍລິຫານ ຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນຂໍ້ມູນທາງການເງິນກາງປີ ຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ (ບໍລິສັດ), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນສິ້ນສຸດວັນທີ 30 ມິຖຸນາ 2026, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ, ໃບລາຍງານກະແສເງິນສົດ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີໂດຍຫຍໍ້. ຜູ້ບໍລິຫານຂອງບໍລິສັດ ມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດ ຕາມທີ່ໄດ້ກຳນົດໄວ້ໃນ ບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີ. ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າຄື ການອອກບົດສະຫຼຸບຕໍ່ເອກະສານລາຍງານການເງິນດັ່ງກ່າວ ບົນພື້ນຖານການທົບທວນຄືນຂອງພວກເຮົາ.

ຂອບເຂດການທົບທວນຄືນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານການທົບທວນຄືນແບບສາກົນ 2410 "ການທົບທວນຄືນເອກະສານລາຍງານການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະ", ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິເຄາະຂໍ້ມູນດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນນີ້ມີຂອບເຂດຈຳກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ. ສະນັ້ນ, ການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບຂອງພວກຂ້າພະເຈົ້າໄດ້. ດັ່ງນັ້ນ, ພວກເຮົາຈະບໍ່ສະແດງຄວາມເຫັນບົນພື້ນຖານການກວດສອບ.

ສະຫຼຸບ

ບົນພື້ນຖານການທົບທວນຄືນຂອງພວກຂ້າພະເຈົ້າ, ບໍ່ມີສິ່ງໃດທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນກາງປີດັ່ງກ່າວ ກະກຽມຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນສະບັບນີ້.

ການເນັ້ນຢ້ຳເລື່ອງສຳຄັນ - ພື້ນຖານໃນການສ້າງເອກະສານລາຍງານການເງິນ

ພວກເຮົາຂໍເນັ້ນຢ້ຳໃຫ້ເຫັນເຖິງບົດອະທິບາຍຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີ ເຊິ່ງອະທິບາຍເຖິງພື້ນຖານໃນການສ້າງເອກະສານລາຍງານການເງິນ. ເອກະສານລາຍງານການເງິນໄດ້ຖືກສ້າງຂຶ້ນຕາມນະໂຍບາຍບັນຊີຂອງບໍລິສັດ ເຊິ່ງອາດມີຄວາມແຕກຕ່າງຈາກມາດຕະຖານການລາຍງານບັນຊີສາກົນ (IFRS). ສຳລັບຮອບໄລຍະບັນຊີເລີ່ມຕົ້ນໃນ ຫຼື ຫຼັງຈາກວັນທີ 1 ມັງກອນ 2026 ເປັນຕົ້ນໄປ, ບັນດາບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງປະຕິບັດຕາມມາດຕະຖານການລາຍງານບັນຊີສາກົນ IFRS ຢ່າງຄົບຖ້ວນ. ປັດຈຸບັນ, ບໍລິສັດກຳລັງດຳເນີນການຂໍອະນຸຍາດຈາກໜ່ວຍງານກຳກັບດູແລທີ່ກ່ຽວຂ້ອງ ເພື່ອຂໍເລື່ອນການນຳໃຊ້ມາດຕະຖານການລາຍງານບັນຊີສາກົນ IFRS ອອກໄປ. ຂໍ້ສະຫຼຸບຂອງພວກເຮົາບໍ່ໄດ້ຖືກປັບປຸງ ຫຼື ປ່ຽນແປງໃດໆ ອັນເນື່ອງຈາກເລື່ອງນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

S. Wanichpan

ໂດຍ: ທ່ານ ນາງ ສຸຂຸມາພອນ ວົງອະລິຍາພອນ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
26 ສິງຫາ 2026

www.pwc.com

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ໃບລາຍງານຖານະການເງິນ
ວັນທີ 30 ມິຖຸນາ 2026

	ບົດອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	6	7, 931, 767, 246	7, 558, 247, 285
ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ, ສຸດທິ	7	16, 863, 241, 197	12, 623, 318, 902
ຊັບສິນໝຸນວຽນອື່ນໆ		689, 634, 516	255, 196, 782
ລວມຊັບສິນໝຸນວຽນ		25, 484, 642, 959	20, 436, 762, 969
ຊັບສິນບໍ່ໝຸນວຽນ			
ຊັບສິນເພື່ອການລົງທຶນ, ສຸດທິ	8	324, 424, 000, 000	324, 424, 000, 000
ຊັບສິນບັດຄົງທີ່, ເຄື່ອງຈັກ ແລະ ອຸປະກອນ	9	-	22, 969, 703
ລວມຊັບສິນບໍ່ໝຸນວຽນ		324, 424, 000, 000	324, 446, 969, 703
ລວມຊັບສິນ		349, 908, 642, 959	344, 883, 732, 672

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 26 ສິງຫາ 2026

ທ່ານ ເຈິ່ງ ຊຸນລິນ
ປະທານສະພາບໍລິຫານ

ວັນທີ: 26 ສິງຫາ 2026

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທີ່ບທວນຄືນ ໂດຍຫຍໍ້.

ໃບລາຍງານຖານະການເງິນ
ວັນທີ 30 ມິຖຸນາ 2026

	ປົດອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ	10	13, 532, 833, 434	13, 427, 872, 040
ລວມໜີ້ສິນໝຸນວຽນ		13, 532, 833, 434	13, 427, 872, 040
ໜີ້ສິນບໍ່ໝຸນວຽນ			
ອາກອນໜີ້ສິນເຍື້ອນຊຳລະ	13	40, 873, 535, 595	39, 637, 855, 471
ລວມໜີ້ສິນບໍ່ໝຸນວຽນ		40, 873, 535, 595	39, 637, 855, 471
ລວມໜີ້ສິນ		54, 406, 369, 029	53, 065, 727, 511
ທຶນ			
ທຶນຈົດທະບຽນ	11	147, 199, 900, 000	147, 199, 900, 000
ສ່ວນເພີ່ມມູນຄ່າຮຸ້ນ		2, 559, 995, 000	2, 559, 995, 000
ຄັງແຮຕາມລະບຽບການ		7, 163, 503, 055	7, 163, 503, 055
ຄັງແຮເພື່ອຂະຫຍາຍທຸລະກິດ		7, 163, 503, 055	7, 163, 503, 055
ກຳໄລສະສົມ		131, 415, 372, 820	127, 731, 104, 051
ລວມທຶນ		295, 502, 273, 930	291, 818, 005, 161
ລວມໜີ້ສິນ ແລະ ທຶນ		349, 908, 642, 959	344, 883, 732, 672

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 26 ສິງຫາ 2026

ທ່ານ ເຈີ ຊຸນລິນ
ປະທານສະພາບໍລິຫານ

ວັນທີ: 26 ສິງຫາ 2026

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ປົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້.

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026

	ປົດອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ລາຍຮັບຈາກການບໍລິການ		11, 215, 641, 976	12, 041, 776, 559
ຕົ້ນທຶນຈາກການບໍລິການ		(3, 376, 654, 811)	(1, 880, 484, 162)
ກຳໄລຂັ້ນຕົ້ນ		**7, 838, 987, 165**	**10, 161, 292, 397**
ລາຍຮັບອື່ນໆ		11, 963, 916	8, 007, 641
ລາຍຈ່າຍໃນການຂາຍ		(2, 250, 000, 000)	(2, 250, 000, 000)
ລາຍຈ່າຍບໍລິຫານ		(744, 083, 909)	(904, 635, 217)
ກຳໄລຈາກການຂາຍຊັບສິນເພື່ອການລົງທຶນ		-	2, 919, 809, 865
ກຳໄລຈາກອັດຕາແລກປ່ຽນ, ສຸດທິ		799, 081, 221	137, 358, 978
ກຳໄລກ່ອນຫັກອາກອນກຳໄລ		**5, 655, 948, 393**	**10, 071, 833, 664**
ອາກອນກຳໄລ	13	(1, 235, 680, 124)	(1, 379, 467, 630)
ກຳໄລສຸດທິສຳລັບໄລຍະ		**4, 420, 268, 269**	**8, 692, 366, 034**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	14	30. 03	59. 05

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 26 ສິງຫາ 2026

ທ່ານ ເຈີ ຊຸນລິນ
ປະທານສະພາບໍລິຫານ

ວັນທີ: 26 ສິງຫາ 2026

ປົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026

	ບິດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ຄັງແຮຕາມລະບຽບການ ກີບ	ຄັງແຮເພື່ອຂະຫຍາຍ ທຸລະກິດ ກີບ	ກຳໄລສະສົມ ກີບ	ລວມ ກີບ
ຍອດເຫຼືອໃນວັນທີ 1 ມັງກອນ 2025 - ກວດສອບ		147, 199, 900, 000	2, 559, 995, 000	6, 196, 231, 071	6, 196, 231, 071	120, 728, 927, 678	282, 881, 284, 820
ຈ່າຍເງິນປັນຜົນ	12	–	–	–	–	(735, 999, 500)	(735, 999, 500)
ກຳໄລສຸດທິສຳລັບໄລຍະ		–	–	–	–	8, 692, 366, 034	8, 692, 366, 034
ຍອດເຫຼືອໃນວັນທີ 30 ມິຖຸນາ 2025 - ທີບທວນຄືນ		**147, 199, 900, 000**	**2, 559, 995, 000**	**6, 196, 231, 071**	**6, 196, 231, 071**	**128, 685, 294, 212**	**290, 837, 651, 354**
ຍອດເຫຼືອໃນວັນທີ 1 ມັງກອນ 2026 - ກວດສອບ		147, 199, 900, 000	2, 559, 995, 000	7, 163, 503, 055	7, 163, 503, 055	127, 731, 104, 051	291, 818, 005, 161
ຈ່າຍເງິນປັນຜົນ	12	–	–	–	–	(735, 999, 500)	(735, 999, 500)
ກຳໄລສຸດທິສຳລັບໄລຍະ		–	–	–	–	4, 420, 268, 269	4, 420, 268, 269
ຍອດເຫຼືອໃນວັນທີ 30 ມິຖຸນາ 2026 – ທີບທວນຄືນ		**147, 199, 900, 000**	**2, 559, 995, 000**	**7, 163, 503, 055**	**7, 163, 503, 055**	**131, 415, 372, 820**	**295, 502, 273, 930**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 26 ສິງຫາ 2026

ທ່ານ ເຈີ ຊຸນລິນ
ປະທານສະພາບໍລິຫານ

ວັນທີ: 26 ສິງຫາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທີບທວນຄືນ ໂດຍຫຍໍ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026

	ບົດອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ກະແສເງິນສົດຈາກການກິດຈະກຳການດຳເນີນງານ:			
ກຳໄລກ່ອນຫັກອາກອນກຳໄລສຳລັບໄລຍະ		5, 655, 948, 393	10, 071, 833, 664
ປັບປຸງເພື່ອສົມທຽບກຳໄລສຸດທິກັບເງິນສົດສຸດທິ:			
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	9	22, 969, 703	48, 105, 127
ລາຍຮັບດອກເບ້ຍ		(11, 963, 916)	(8, 007, 641)
ກຳໄລຈາກການຂາຍຊັບສິນເພື່ອການລົງທຶນ		-	(2, 919, 809, 865)
ກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		(804, 204, 746)	(136, 438, 231)
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງເງິນທຶນໝຸນວຽນ		**4, 862, 749, 434**	**7, 055, 683, 054**
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ		(3, 506, 109, 736)	(5, 772, 048, 317)
ຊັບສິນໝຸນວຽນອື່ນໆ		(434, 437, 734)	122, 208, 074
ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ		(123, 037, 957)	(2, 528, 868, 145)
ກະແສເງິນສົດທີ່ເກີດຈາກ/(ໃຊ້ໃນ) ການດຳເນີນງານ		**799, 164, 007**	**(1, 123, 025, 334)**
ດອກເບ້ຍທີ່ໄດ້ຮັບ		11, 963, 916	8, 007, 641
ກະແສເງິນສົດສຸດທິທີ່ເກີດຈາກ/(ໃຊ້ໃນ) ກິດຈະກຳການດຳເນີນງານ		**811, 127, 923**	**(1, 115, 017, 693)**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ການໄດ້ມາຂອງຊັບສິນເພື່ອການລົງທຶນ		-	(140, 160, 000)
ໄດ້ຮັບເງິນຈາກການຂາຍຊັບສິນເພື່ອການລົງທຶນ		-	4, 408, 076, 631
ເງິນສົດສຸດທິທີ່ເກີດຈາກ ກິດຈະກຳລົງທຶນ		**-**	**4, 267, 916, 631**
ກະແສເງິນສົດຈາກ ກິດຈະກຳການເງິນ			
ຈ່າຍເງິນປັນຜົນ	12	(735, 999, 500)	(735, 999, 500)
ເງິນສົດສຸດທິໃຊ້ໃນ ກິດຈະກຳທາງການເງິນ		**(735, 999, 500)**	**(735, 999, 500)**

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026

	ບົດອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ເພີ່ມຂຶ້ນ ສຸດທິໃນເງິນສົດ ແລະ ລາຍການທຽບ ເທົ່າເງິນສົດ		75, 128, 423	2, 416, 899, 438
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນໄລຍະ	6	7, 558, 247, 285	2, 895, 334, 895
ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		298, 391, 538	8, 406, 763
ເງິນສົດ ແລະ ລາຍການທຽບເທົ່າເງິນສົດສຳລັບທ້າຍໄລຍະ		7, 931, 767, 246	5, 320, 641, 096

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 26 ສິງຫາ 2026

ທ່ານ ເຈິ່ງ ຊຸນລິນ
ປະທານສະພາບໍລິຫານ

ວັນທີ: 26 ສິງຫາ 2026

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທີ່ບທວນຄືນ ໂດຍຫຍໍ້.

1. ຂໍ້ມູນທົ່ວໄປ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ເປັນບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງໄດ້ດຳເນີນງານ ແລະ ຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈັດຕັ້ງ ແລະ ຈົດທະບຽນພາຍໃຕ້ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ, ລົງວັນທີ 30 ພະຈິກ 2017 ແລະ ໄດ້ມີການຕໍ່ໃບທະບຽນວິສາຫະກິດສະບັບໃໝ່, ລົງວັນທີ 26 ພຶດສະພາ 2022.

ບໍລິສັດຢູ່ພາຍໃຕ້ການຄຸ້ມຄອງຂອງ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນ ຕອນເໜືອ ຈຳກັດ ("NNCD") ເຊິ່ງເປັນບໍລິສັດແມ່ ໂດຍ ຖືຮຸ້ນໃນບໍລິສັດໃນອັດຕາສ່ວນ 65. 22% ໃນຂະນະທີ່ຮຸ້ນທີ່ເຫຼືອອີກ 34. 78% ເປັນຫຸ້ນທີ່ມີການຖືຄອງຢ່າງແຜ່ຫຼາຍ.

ໃນວັນທີ 30 ພະຈິກ 2017, NNCD ໄດ້ໂອນສິດການເຊົ່າຂອງອາຄານ ວຽງຈັນ ເຊັ້ນເຕີ ຊຶ່ງມີເນື້ອທີ່ລວມ 5, 908 ຕາແມັດ ໃຫ້ແກ່ບໍລິສັດ ເພື່ອນຳໃຊ້ໃນການພັດທະນາ ແລະ ບໍລິຫານຈັດການເປັນສູນການຄ້າ ແລະ ພື້ນທີ່ຫ້ອງການໃຫ້ເຊົ່າ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ເອກະສານລາຍງານການເງິນທົບທວນຄືນ ສະບັບນີ້ໄດ້ຜ່ານການອະນຸມັດ ໂດຍຄະນະຜູ້ອຳນວຍການ ໃນວັນທີ 26 ສິງຫາ 2026.

2. ພື້ນຖານກະກຽມ

ເອກະສານລາຍງານທາງການເງິນທົບທວນຄືນໄດ້ຖືກສ້າງຂຶ້ນສອດຄ່ອງກັບນະໂຍບາຍການບັນຊີຂອງ ບໍລິສັດທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ 2 ໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2025. ເອກະສານລາຍງານ ການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍ ງານກະແສເງິນສົດ) ແມ່ນຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບ ການເປີດເຜີຍຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຮ່ວມກັບບົດລາຍງານການເງິນປະຈຳປີສິ້ນສຸດ 31 ທັນວາ 2025.

ອີງຕາມກົດໝາຍການບັນຊີ ເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງນຳ ໃຊ້ມາດຕະຖານການລາຍງານການເງິນສາກົນ (IFRS). ຢ່າງໃດກໍຕາມ, ກະຊວງການເງິນໄດ້ອອກແຈ້ງການ ສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ເລກທີ 0009/ຫຄກລ ລົງວັນທີ 25 ພຶດສະພາ 2020, ເຊິ່ງໄດ້ໃຫ້ທາງເລືອກສຳລັບ PIES ໃນການຈັດການແຜນປະຕິບັດການ ສຳລັບ ການນຳໃຊ້ IFRS ຈົນຮອດວັນທີ 31 ທັນວາ 2025. ສຳລັບ ຮອບໄລຍະບັນຊີທີ່ເລີ່ມຕົ້ນໃນ ຫຼື ຫຼັງວັນທີ 1 ມັງກອນ 2026 ເປັນຕົ້ນ ໄປ, ບັນດາບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງປະຕິບັດຕາມ IFRS ຢ່າງຄົບຖ້ວນ.

ໃນປັດຈຸບັນ, ຝ່າຍບໍລິຫານກຳລັງດຳເນີນຂໍອະນຸຍາດຈາກໜ່ວຍງານກຳກັບດູແລທີ່ກ່ຽວຂ້ອງ ເພື່ອຂໍເລື່ອນການນຳໃຊ້ IFRS ອອກ ໄປ. ດັ່ງນັ້ນ, ຂໍ້ມູນທາງການເງິນທີ່ແນບມານີ້ ຈຶ່ງຍັງຄົງຖືກຈັດທຳຂຶ້ນຕາມນະໂຍບາຍການບັນຊີທີ່ບໍລິສັດນຳໃຊ້ຢູ່ໃນປັດຈຸບັນ.

3. ນະໂຍບາຍການບັນຊີ

ນະໂຍບາຍການບັນຊີທີ່ໃຊ້ໃນການກະກຽມເອກະສານລາຍງານການເງິນທົບທວນຄືນແມ່ນສອດຄ່ອງກັບກັບເອກະສານລາຍງານ ການເງິນປະຈຳປີສຳລັບປີສິ້ນສຸດວັນທີ 31 ທັນວາ 2025. ຕິວເລກປຽບທຽບບາງຢ່າງໄດ້ຖືກຈັດປະເພດໃໝ່ເພື່ອໃຫ້ສອດຄ່ອງກັບ ການນຳສະເໜີໄລຍະເວລາປະຈຸບັນ, ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍ ຂໍ້ 4.

4. ການຈັດປະເພດຂໍ້ມູນປຽບທຽບຄືນໃໝ່

ໃນລະຫວ່າງໄລຍະເວລາຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດໄດ້ປັບປຸງການນຳສະເໜີລາຍຮັບ ແລະ ລາຍຈ່າຍບາງຢ່າງເພື່ອສະທ້ອນເຖິງຄຸນລັກສະນະ ແລະ ໜ້າທີ່ຂອງທຸລະກຳພື້ນຖານໄດ້ດີຂຶ້ນ. ການນຳສະເໜີໃນຮູບແບບໃໝ່ນີ້ເຮັດໃຫ້ຜົນການດຳເນີນງານທາງການເງິນຂອງບໍລິສັດມີຄວາມຊັດເຈນ ແລະ ມີຄວາມກ່ຽວຂ້ອງຫຼາຍຂຶ້ນ. ຕົວເລກປຽບທຽບສຳລັບໄລຍະເວລາຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2025 ໄດ້ຖືກຈັດປະເພດໃໝ່ເພື່ອໃຫ້ສອດຄ່ອງກັບການນຳສະເໜີໃນໄລຍະປະຈຸບັນ.

ພາຍໃຕ້ການນຳສະເໜີກ່ອນໜ້ານີ້:

- ລາຍຮັບຈາກການເຊົ່າພື້ນທີ່ຈັດງານ ແລະ ລາຍຮັບດອກເບ້ຍໄດ້ຖືກລວມເຂົ້າໃນລາຍຮັບຈາກການດຳເນີນງານອື່ນໆ.
- ຕົ້ນທຶນຈາກການບໍລິການ, ລາຍຈ່າຍໃນການຂາຍ ແລະ ລາຍຈ່າຍບໍລິຫານໄດ້ຖືກນຳສະເໜີລວມກັນເປັນຄ່າໃຊ້ຈ່າຍໃນການດຳເນີນງານ ແລະ ການບໍລິຫານ.

ພາຍໃຕ້ການນຳສະເໜີທີ່ໄດ້ຮັບການປັບປຸງ:

- ລາຍຮັບຈາກການເຊົ່າພື້ນທີ່ຈັດງານ ຖືກລວມຢູ່ໃນລາຍຮັບຈາກການບໍລິການ.
- ລາຍຮັບດອກເບ້ຍຖືກນຳສະເໜີໃນລາຍຮັບອື່ນໆ.
- ຕົ້ນທຶນຈາກການບໍລິການ, ລາຍຈ່າຍໃນການຂາຍ ແລະ ລາຍຈ່າຍບໍລິຫານແມ່ນນຳສະເໜີແຍກຕ່າງຫາກຕາມໜ້າທີ່ຂອງລາຍການດັ່ງກ່າວ.

ຜົນກະທົບຂອງການຈັດປະເພດໃໝ່ໃນໃບລາຍງານຜົນໄດ້ຮັບສຳລັບໄລຍະເວລາຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2025 ມີດັ່ງນີ້:

ໃບລາຍງານຜົນໄດ້ຮັບໄລຍະ ສິ້ນສຸດວັນທີ 30 ມິຖຸນາ 2025 (ບົດຄັດຫຍໍ້)	ການຈັດປະເພດຕາມ ລາຍງານຄັ້ງກ່ອນ ກີບ	ການຈັດປະເພດ ຄືນໃໝ່ ກີບ	ພາຍຫຼັງຈັດປະເພດ ຄືນໃໝ່ ກີບ
ລາຍຮັບຈາກການບໍລິການ	11, 655, 287, 517	386, 489, 042	12, 041, 776, 559
ຕົ້ນທຶນຈາກການບໍລິການ	–	(1, 880, 484, 162)	(1, 880, 484, 162)
ກຳໄລຂັ້ນຕົ້ນ	**11, 655, 287, 517**	**(1, 493, 995, 120)**	**10, 161, 292, 397**
ລາຍຮັບຈາກການດຳເນີນງານອື່ນໆ	394, 496, 683	(394, 496, 683)	-
ລາຍຮັບອື່ນໆ	–	8,007,641	8,007,641
ລາຍຈ່າຍບໍລິຫານ	–	(904,635,217)	(904,635,217)
ລາຍຈ່າຍໃນການຂາຍ	–	(2,250,000,000)	(2,250,000,000)
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	(5, 035, 119, 379)	5,035,119,379	-

ການຈັດປະເພດໃໝ່ບໍ່ມີຜົນກະທົບຕໍ່ຍອດລວມຂອງຊັບສິນ, ໜີ້ສິນ, ສ່ວນຂອງເຈົ້າຂອງ, ກຳໄລກ່ອນຫັກອາກອນ, ກຳໄລສຸດທິ ຫຼື ກະແສເງິນສົດ.

5. ການຄາດຄະເນ

ການກະກຽມເອກະສານລາຍງານການເງິນທວນຄືນ ແມ່ນຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ, ການຄາດຄະເນ ແລະ ການສົມມຸດຕິຖານ ທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລ່າຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານການເງິນທວນຄືນ ຜູ້ບໍລິຫານມີການຕັດສິນໃຈໃນການນຳໃຊ້ນະໂຍບາຍການບັນຊີຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບຫຼັກການທີ່ໃຊ້ສຳລັບການສ້າງເອກະສານທາງການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025.

6. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ເງິນສົດໃນມື	-	-
ເງິນສົດໃນທະນາຄານ	7, 931, 767, 246	7, 558, 247, 285
	7, 931, 767, 246	**7, 558, 247, 285**

7. ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ສາມ	3, 273, 713, 816	1, 473, 310, 998
ຫັກ: ສຳຮອງບັນຊີໜີ້ສົງໄສຈະເສຍ	(465, 225, 832)	(465, 225, 832)
	2, 808, 487, 984	**1, 008, 085, 166**
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 15.2)	11, 830, 226, 578	10, 643, 938, 454
ເງິນລ່ວງໜ້າພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 15.2)	2, 224, 526, 635	971, 295, 282
	16, 863, 241, 197	**12, 623, 318, 902**

8. ຊັບສິນເພື່ອການລົງທຶນ, ສຸດທິ

	ກີບ
ວັນທີ 1 ມັງກອນ 2026 - ກວດສອບ	324, 424, 000, 000
ກຳໄລ/(ຂາດທຶນ) ຈາກການຕີມູນຄ່າຄືນໃໝ່	-
ມູນຄ່າຍັງເຫຼືອຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2026 - ທົບທວນຄືນ	**324, 424, 000, 000**

9. ຊັບສິນບັດຄົງທີ່, ເຄື່ອງຈັກ ແລະ ອຸປະກອນ

	ກີບ
ວັນທີ 1 ມັງກອນ 2026 - ກວດສອບ	22, 969, 703
ເພີ່ມຂຶ້ນ	-
ຄ່າຫຼ້ຍຫ້ຽນ	(22, 969, 703)
ມູນຄ່າຍັງເຫຼືອຕາມບັນຊີສຸດທ ໃນວັນທ 30 ມິຖຸນາ 2026 - ທ່ບທວນຄືນ	-

10. ໜີ້ຕ້ອງສິ່ງທາງການຄ້າ ແລະ ອື່ນໆ

	ທ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ລາຍຮັບລ່ວງໜ້າຈາກຜູ້ເຊົ່າ	6, 361, 810, 153	6, 810, 304, 328
ເງິນມັດຈຳຈາກຜູ້ເຊົ່າ	5, 158, 823, 720	5, 260, 837, 771
ໜີ້ຕ້ອງສິ່ງອື່ນໆ - ພາກສ່ວນທ່ ກ່ຽວຂ້ອງ (ບົດອະທິບາຍຂໍ້ 15. 2)	1, 647, 526, 325	1, 215, 155, 811
ໜີ້ຕ້ອງສິ່ງອື່ນໆ	364, 673, 236	141, 574, 130
	13, 532, 833, 434	**13, 427, 872, 040**

11. ທຶນຈົດທະບຽນ

ບໍ່ມີການເຄື່ອນໄຫວໜຶ ຫຼື ອອກຮຸ້ນເພ່ີມສຳລັບໄລຍະຫົກເດືອນ ສິ້ນສຸດວັນທ 30 ມິຖຸນາ 2026.

12. ເງິນປັນຜົນ

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຈັດຂຶ້ນໃນວັນທ 08 ພຶດສະພາ 2026, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທ ສຳລັບປີສິ້ນສຸດ ວັນທ 31 ທັນວາ 2025 ຈຳນວນ 5 ກີບຕ່ໍຮຸ້ນ, ລວມເປັນເງິນທັງໝົດ 735, 999, 500 ກີບ. ເງິນປັນຜົນຖືກຈ່າຍໃນວັນທ 28 ພຶດສະພາ 2026.

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຈັດຂຶ້ນໃນວັນທ 09 ພຶດສະພາ 2025, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທ ສຳລັບປີສິ້ນສຸດ ວັນທ 31 ທັນວາ 2024 ຈຳນວນ 5 ກີບຕ່ໍຮຸ້ນ, ລວມເປັນເງິນທັງໝົດ 735, 999, 500 ກີບ. ເງິນປັນຜົນຖືກຈ່າຍໃນວັນທ 28 ພຶດສະພາ 2025.

13. ລາຍຈ່າຍອາກອນກຳໄລ

ອົງປະກອບສຳຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ລາຍຈ່າຍອາກອນກຳໄລພາຍໃນໄລຍະ	-	(222,442,384)
ລາຍຈ່າຍອາກອນເຍື້ອນຊຳລະ (13. 2)	(1, 235, 680, 124)	(1,157,025,246)
ລວມລາຍຈ່າຍອາກອນພາຍໃນໄລຍະ	(1, 235, 680, 124)	(1,379, 467, 630)

13. 1 ລາຍຈ່າຍອາກອນກຳໄລ

ບໍລິສັດມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 20% (2025: 20%) ຂອງກຳໄລກ່ອນອາກອນ ໂດຍໃຫ້ສອດຄ່ອງກັບກົດໝາຍອາກອນ.

ການຄິດໄລ່ຂອງອາກອນກຳໄລສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026 ແມ່ນມີດັ່ງຕໍ່ໄປນີ້:

	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ກຳໄລກ່ອນອາກອນ	5, 655, 948, 393	10, 071, 833, 664
ຜົນກະທົບຈາກອາກອນ:		
ຄ່າເສື່ອມລາຄາທີ່ຫັກໄດ້ທາງພາສີ	(5, 374, 197, 372)	(146, 788, 541)
ລາຍຈ່າຍທີ່ບໍ່ສາມາດນຳມາຫັກພາສີໄດ້	227, 999, 351	10, 350, 310
ລາຍຮັບທີ່ບໍ່ສາມາດນຳມາເປັນລາຍຮັບທາງພາສີ	(1, 032, 204, 097)	(5, 648, 687, 999)
ພື້ນຖານກຳໄລກ່ອນອາກອນ ກ່ອນຫັກຂາດທຶນອາກອນຍົກຍອດໄປຫັກຕໍ່	(522, 453, 725)	4, 286, 707, 434
ຂາດທຶນອາກອນຍົກຍອດໄປຫັກຕໍ່ (ບົດອະທິບາຍຂໍ້ 13. 3)*	-	(3, 174, 495, 513)
ພື້ນຖານກຳໄລ/(ຂາດທຶນ)ກ່ອນອາກອນ ຫຼັງຫັກຂາດທຶນອາກອນຍົກຍອດໄປຫັກຕໍ່	(522, 453, 725)	1, 112, 211, 921
ອັດຕາອາກອນກຳໄລ	20%	20%
ລາຍຈ່າຍອາກອນກຳໄລ	-	222, 442, 384

*ໃນວັນທີ 30 ມິຖຸນາ 2025, ບໍລິສັດໄດ້ຮັບຮູ້ລາຍຈ່າຍອາກອນກຳໄລໂດຍອີງໃສ່ພື້ນຖານກຳໄລກ່ອນອາກອນ. ພາຍຫຼັງສຳເລັດການຄຳນວນພາສີປະຈຳປີ 2025, ເຫັນວ່າຂາດທຶນທາງອາກອນ, ເຊິ່ງນຳໄປສູ່ການລ້າງລາຍຈ່າຍອາກອນກຳໄລທີ່ຮັບຮູ້ກ່ອນໜ້ານີ້ຢ່າງສົມບູນ.

ໃນວັນທີ 31 ທັນວາ 2025 ແລະ 30 ມິຖຸນາ 2026, ບໍລິສັດມີການສູນເສຍພາສີທີ່ຍັງບໍ່ໄດ້ນຳໃຊ້ຈຳນວນ 3, 174, 495, 513 ກີບ ເຊິ່ງສາມາດຫັກລ້າງກັບກຳໄລທີ່ຕ້ອງເສຍພາສີໃນອະນາຄົດ.

13. ລາຍຈ່າຍອາກອນກຳໄລ (ຕໍ່)

13.2 ໜີ້ອາກອນເຍື້ອນຊຳລະ

ການເຄື່ອນໄຫວລວມຂອງໜີ້ສິນອາກອນເຍື້ອນຊຳລະສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ ແມ່ນມີດັ່ງຕໍ່ໄປນີ້:

	2026 ກີບ	2025 ກີບ
ໃນວັນທີ 01 ມັງກອນ	39, 637, 855, 471	36, 807, 966, 154
ບັນທຶກເຂົ້າກຳໄລ ຫຼື ຂາດທຶນ	1, 235, 680, 124	1, 157, 025, 246
ໃນວັນທີ 30 ມິຖຸນາ	**40, 873, 535, 595**	**37, 964, 991, 400**

ການເຄື່ອນໄຫວຂອງໜີ້ສິນອາກອນເຍື້ອນຊຳລະພາຍໃນປີ ແລະ ປີກ່ອນມີດັ່ງລຸ່ມນີ້:

	ໃນວັນທີ 31 ທັນວາ 2025 ກີບ	ບັນທຶກ ເຂົ້າກຳໄລ ຫຼື ຂາດທຶນ ກີບ	ໃນວັນທີ 30 ມິຖຸນາ 2026 ກີບ
ຄ່າເສື່ອມມູນຄ່າຈາກການປະເມີນມູນຄ່າ ຊັບສິນ			
ການລົງທຶນ	15, 665, 588, 454	1, 074, 839, 175	16, 740, 427, 629
ກຳໄລ/(ຂາດທຶນ)ຈາກການຕີມູນຄ່າຄືນໃໝ່	23, 918, 402, 721	–	23, 918, 402, 721
ອື່ນໆ*	53, 864, 296	160, 840, 949	214, 705, 245
	39, 637, 855, 471	**1, 235, 680, 124**	**40, 873, 535, 595**

*ສ່ວນໃຫຍ່ແມ່ນມາຈາກກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ ແລະ ສຳຮອງບັນຊີໜີ້ສິງໄສຈະເສຍ.

13.3 ຂາດທຶນອາກອນຍົກຍອດໄປຫັກຕໍ່

ອີງຕາມກົດໝາຍອາກອນສະບັບແກ້ໄຂເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ທີ່ມີຜົນສັກສິດຕັ້ງແຕ່ວັນທີ 1 ມັງກອນ 2020, ມາດຕາ 23, ຜູ້ດຳເນີນທຸລະກິດ ທີ່ເສຍອາກອນກຳໄລຕາມລະບົບການຖືບັນຊີທີ່ມີການຂາດທຶນໃນປີ ໂດຍມີການຢັ້ງຢືນຈາກອົງການການກວດສອບບັນຊີ ຫຼື ບໍລິສັດກວດສອບບັນຊີເອກະລາດ ແລະ ໄດ້ມີການຮັບຮູ້ຈາກຂະແໜງສ່ວຍສາອາກອນ ມີສິດຍົກເງິນຂາດທຶນດັ່ງກ່າວ ໄປຫັກອອກຈາກກຳໄລຂອງປີຖັດໄປ ພາຍໃນເວລາຫ້າປີ. ໃນວັນທີ 30 ມິຖຸນາ 2026, ບໍລິສັດມີຂາດທຶນອາກອນຍົກຍອດໄປຫັກຕໍ່ສະສົມລວມທີ່ສາມາດຫັກລົບກັບກຳໄລທາງອາກອນ ໃນອະນາຄົດດັ່ງລາຍລະອຽດລຸ່ມນີ້:

ປີເລີ່ມຕົ້ນ	ສາມາດໃຊ້ໄດ້ ເຖິງ	ຂາດທຶນອາກອນ ກີບ	ນຳໃຊ້ສະສົມເຖິງ 30 ມິຖຸນາ 2026 ກີບ	ເສຍສິດ ກີບ	ຍັງບໍ່ໄດ້ນຳໃຊ້ໃນ ວັນທີ 30 ມິຖຸນາ 2026 ກີບ
2021*	2026	4, 275, 760, 240	(1, 101, 264, 727)	-	3, 174, 495, 513
		4, 275, 760, 240	**(1, 101, 264, 727)**	-	**3, 174, 495, 513**

*ຂາດທຶນອາກອນຍົກຍອດໄປຫັກຕໍ່ສຳລັບປີສິ້ນສຸດ 31 ທັນວາ 2021 ໄດ້ຖືກປະເມີນຈາກຂະແໜງສ່ວຍສາອາກອນ ໃນວັນທີ 27 ມັງກອນ 2023.

14. ກຳໄລຕໍ່ຮຸ້ນ

ພື້ນຖານການຄິດໄລ່ກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ຈາກການແບ່ງກຳໄລສຸດທິໃຫ້ຜູ້ຖືຮຸ້ນ ດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນທີ່ອອກພາຍໃນໄລຍະ.

	ທີ່ບທວນຄືນ 30 ມິຖຸນາ 2026	ທີ່ບທວນຄືນ 30 ມິຖຸນາ 2025
ກຳໄລ ສຸດທິຂອງຜູ້ຖືຮຸ້ນ (ກີບ)	4, 420, 268, 269	8, 692, 366, 034
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນທີ່ອອກທັ້ງໝົດ (ຮຸ້ນ)	147, 199, 900	147, 199, 900
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	30. 03	59. 05

15. ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ພາຍໃຕ້ການຄວບຄຸມຂອງ ບໍລິສັດ ລວມເຖິງການລົງທຶນໃນນິຕິບຸກຄົນ ແລະ ບຸກຄົນ ຫຼື ນິຕິບຸກຄົນ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນເຫຼົ່ານັ້ນ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນດັ່ງຕໍ່ໄປນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ:

15.1. ການຊື້ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ຊື້ບໍລິການຈາກ:		
ບໍລິສັດແມ່		
- ຄ່າບໍລິຫານຈັດການ	2, 250, 000, 000	2, 250, 000, 000
- ຄ່າບຳລຸງຮັກສາ	1, 757, 078, 864	1, 703, 945, 308
- ຄ່າເຊົ່າພື້ນທີ່ຈອດລົດ	268, 295, 713	-
- ຄ່າເຊົ່າປ້າຍໂຄສະນາ	1, 016, 626, 842	-

15. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

15.2. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກທຸລະກຳການບໍລິການ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຮັບທາງການຄ້າ:		
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 7)	11, 830, 226, 578	10, 643, 938, 454
ເງິນລ່ວງໜ້າພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 7)	2, 224, 526, 635	971, 295, 282
ຊັບສິນໝຸນວຽນອື່ນໆ:		
ຈ່າຍລ່ວງໜ້າຄ່າເຊົ່າພື້ນທີ່ຈອດລົດ ແລະ ປ້າຍໂຄສະນາ	542, 253, 164	-
ໜີ້ຕ້ອງສົ່ງທາງການຄ້າ:		
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 10)	1, 647, 526, 325	1, 215, 155, 811

16. ພາລະຜູກພັນ

ຜູ້ໃຫ້ເຊົ່າ

ບໍລິສັດໄດ້ໃຫ້ເຊົ່າພື້ນທີ່ຮ້ານຄ້າຍ່ອຍ ແລະ ຫ້ອງການ ພາຍໃຕ້ຂໍ້ຕົກລົງການເຊົ່າເພື່ອການດຳເນີນງານ. ໜີ້ຕ້ອງຮັບຈາກຄ່າເຊົ່າຂັ້ນຕ່ຳ ໃນອະນາຄົດ ນະວັນທີ 30 ມິຖຸນາ 2026 ແລະ 31 ທັນວາ 2025 ພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຕ່ຳກວ່າ 1 ປີ	7, 338, 315, 756	5, 623, 055, 176
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	4, 794, 164, 949	6, 265, 683, 366
	12, 132, 480, 705	11, 888, 738, 542

ພາລະຜູກພັນພາຍໃຕ້ສັນຍາຮ່ວມມືທຸລະກິດ

ບໍລິສັດໄດ້ເຊັນສັນຍາໃນການຮ່ວມມືທຸລະກິດ ເຊິ່ງໃນນັ້ນລາຍຮັບຈາກການດຳເນີນງານຂອງໂຮງໜັງ ທີ່ຖືກກຳນົດໃນອັດຕາຄົງທີ່ໄວ້ ໃນສັນຍາດັ່ງກ່າວ ຄູ່ຮ່ວມທຸລະກິດເຊິ່ງເປັນຜູ້ເຊົ່າ ຕ້ອງແບ່ງລາຍຮັບຈາກລາຍໄດ້ຂອງໂຮງໜັງໃຫ້ແກ່ບໍລິສັດ ນັບຈາກ ທັນວາ 2017 ຫາ ສິງຫາ 2035 ເຊິ່ງມີລາຍລະອຽດດັ່ງຕ່ຳໄປນີ້:

(i) ແບ່ງສ່ວນລາຍຮັບຈາກການຂາຍປີ້ໜັງ ໃນອັດຕາ 12% ແລະ (ii) ແບ່ງສ່ວນລາຍຮັບຈາກການຂາຍອາຫານ, ເຄື່ອງດື່ມ ແລະຂອງທີ່ລະນຶກ ໃນອັດຕາ 15%. ໃນລະຫວ່າງ 1 ກຸມພາ 2024 ຫາ 31 ຕຸລາ 2026, ທາງຜູ້ບໍລິຫານໄດ້ເຫັນດີຫຼຸດເປີເຊັນຂອງ ການແບ່ງສ່ວນລາຍຮັບຈາກການຂາຍປີ້ໜັງ ຈາກ 12% ເປັນ 8% ແລະ (ii) ແບ່ງສ່ວນລາຍຮັບຈາກການຂາຍອາຫານ, ເຄື່ອງດື່ມ ແລະຂອງທີ່ລະນຶກຈາກ 15% ເປັນ 10%.

ບໍລິສັດບໍ່ມີສິດຍົກເລີກສັນຍາຮ່ວມມືທຸລະກິດກ່ອນຄົບກຳນົດສັນຍາເຊົ່າ, ເວັ້ນເສຍແຕ່ (i) ມີການລະເມີດອັນຮ້າຍແຮງໂດຍຜູ້ ເຊົ່າ; ຫຼື (ii) ມີເຫດສຸດວິໄສ; ຫຼື (iii) ຝ່າຍໃດຝ່າຍໜຶ່ງຍື່ນຟ້ອງລົ້ມລະລາຍ ຫຼື ບໍ່ສາມາດຊຳລະຕໍ່ໜີ້ສິນໄດ້.

17. ເຫດການທີ່ເກີດຂຶ້ນຫຼັງວັນທີເອກະສານລາຍງານທາງການເງິນ

ບໍ່ມີເຫດການສາລະສຳຄັນເກີດຂຶ້ນຫຼັງຈາກວັນທີເອກະສານລາຍງານການເງິນທີ່ມີຜົນກະທົບຕໍ່ຕົວເລກໃນຂໍ້ມູນການເງິນຂອງບໍລິສັດ.